**Skills on court enforcement**
**ທັກສະການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 8

## General knowledge related to the suspension, modification, canceling or elimination of the execution of the judgment of the court

## ຄວາມຮູ້ທົ່ວໄປກ່ຽວກັບການໂຈະ, ການປ່ຽນແປງ, ການຍົກເລີກ ຫຼື ການລົບລ້າງປະຕິບັດຄຳຕັດສິນຂອງສານ

**1. ຄວາມໝາຍ**

- **ການໂຈະປະຕິບັດຄຳຕັດສິນຂອງສານ**

*"ການໂຈະປະຕິບັດຄຳຕັດສິນຂອງສານ ໝາຍເຖິງການຢຸດຕິການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເມື່ອໝົດສາເຫດຂອງການໂຈະແລ້ວກໍຕ້ອງສືບຕໍ່ປະຕິບັດ"*[1] ເຫັນວ່ານິຍາມນີ້ໄດ້ອະທິບາຍສັ້ນ, ກະທັດຮັດ ແລະ ເຂົ້າໃຈງ່າຍ ເມື່ອທຽບຂໍ້ກຳນົດໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008 ແຕ່ກໍບໍ່ໄດ້ໝາຍຄວາມວ່າມີຄວາມໝາຍແຕກຕ່າງກັນ, ຊຶ່ງກົດໝາຍສະບັບປີ 2008 ໄດ້ກຳນົດວ່າ: "ການໂຈະໝາຍເຖິງການຢຸດການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເມື່ອໝົດສາເຫດຂອງການໂຈະແລ້ວກໍຕ້ອງສືບຕໍ່ຈັດຕັ້ງປະຕິບັດປະຕິບັດ".

ການໂຈະປະຕິບັດຄຳຕັດສິນຂອງສານແມ່ນການຢຸດຕິການເຄື່ອນໄຫວປະຕິບັດຄຳຕັດສິນ, ຄຳຕົກລົງຂອງສານໄວ້ຊົ່ວຄາວເມື່ອມີບ່ອນອີງທາງດ້ານກົດໝາຍ, ເມື່ອໝົດສາເຫດຂອງການໂຈະແລ້ວກໍຕ້ອງສືບຕໍ່ປະຕິບັດ.

ການໂຈະປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ໃນກົດໝາຍດັ່ງກ່າວໄດ້ຍົກໃຫ້ເຫັນບັນດາກໍລະນີທີ່ຈະຖືກໂຈະປະຕິບັດຄຳຕັດສິນຂອງສານ ຫຼື ເວົ້າຢ່າງໜຶ່ງເອີ້ນວ່າສາເຫດທີ່ພາໃຫ້ການປະຕິບັດຄຳຕັດສິນຂອງສານຖືກໂຈະ, ຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ປະເພດນິຕິກຳການໂຈະປະຕິບັດຄຳຕັດສິນຂອງສານແມ່ນຄຳສັ່ງໂຈະຂອງອົງການປະຕິບັດຄຳຕັດສິນຂອງສານ.

- **ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງ**

ໃນການປະຕິບັດຄຳຕັດສິນຂອງສານ ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັນສິນຂອງສານແມ່ນວຽກທີ່ອົງການປະຕິບັດຄຳຕັດສິນຂອງສານດຳເນີນການອອກນິຕິກຳດ້ວຍຄຳສັ່ງປ່ຽນແປງ, ຍົກເລີກ ຫຼື ລົບລ້າງສາຍພົວພັນປະຕິບັດຄຳຕັດສິນຂອງສານເມື່ອມີບ່ອນອີງທາງດ້ານກົດໝາຍ ແລະ ເຫດຜົນພຽງພໍ.

ໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານຕົວຈິງ, ພະນັກງານປະຕິບັດຄຳຕັດສິນຂອງສານມັກຈະມີຄວາມຜິດພາດ, ເປັນຕົ້ນແມ່ນການປະຕິບັດບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ, ປະຕິບັດບໍ່ຖືກຕ້ອງຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ລະເມີດລະບຽບການທີ່ກ່ຽວຂ້ອງ, ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ນິຕິກຳອື່ນຂອງສານ ຫຼື ອາດເປັນຍ້ອນຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ເສຍຊີວິດ, ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໝົດໄປ, ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ຮັບອະໄພຍະໂທດ (ໂທດທາງອາຍາ),ໄດ້ມີການໃຫ້ນິລະໂທດກຳ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງດຳເນີນການແກ້ໄຂໃຫ້ຖືກຕ້ອງ

---

[1] ຂໍ້ 10, ມາດຕາ 3, ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

ດ້ວຍການອອກຄຳສັ່ງປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານໂດຍຂຶ້ນຢູ່ກັບກໍລະນີວ່າອັນໃດຄວນເປັນຄຳສັ່ງປ່ຽນແປງ, ອັນໃດຄວນເປັນຄຳສັ່ງຍົກເລີກ ຫຼື ຄຳສັ່ງລົບລ້າງປະຕິບັດຄຳຕັດສິນຂອງສານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ, ຜົນປະໂຫຍດຂອງລັດ ແລະ ສັງຄົມ.

ດັ່ງນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ:

ການປ່ຽນແປງການປະຕິບັດຄຳຕັດສິນຂອງສານໝາຍເຖິງອົງການປະຕິບັດຄຳຕັດສິນຂອງສານດຳເນີນການອອກນິຕິກຳດ້ວຍຄຳສັ່ງປ່ຽນແປງການປະຕິບັດຄຳຕັດສິນຂອງສານສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ.

"ການປ່ຽນແປງການປະຕິບັດຄຳຕັດສິນ ໝາຍເຖິງ ການປ່ຽນແປງການປະຕິບັດຄຳຕັດສິນຂອງສານ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄຳຕັດສິນຂອງສານ ຫຼື ກົດໝາຍ"[2].

ການຍົກເລີກການປະຕິບັດຄຳຕັດສິນຂອງສານແມ່ນອົງການປະຕິບັດຄຳຕັດສິນຂອງສານດຳເນີນການອອກນິຕິກຳດ້ວຍຄຳສັ່ງຍົກເລີກການປະຕິບັດຄຳຕັດສິນຂອງສານ ເພື່ອກຳນົດຢຸດເຊົາປະຕິບັດຄຳຕັດສິນຂອງສານໂດຍບໍ່ໃຫ້ສືບຕໍ່ປະຕິບັດຄຳຕັດສິນຂອງສານ.

"ການຍົກເລີກການປະຕິບັດຄຳຕັດສິນ ໝາຍເຖິງ ການຢຸດເຊົາການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການຈ່າຍຄ່າທຳນຽມສານ, ຄ່າປັບໃໝ ແລະ/ຫຼື ເງິນຮິບ ຕາມຄຳຕັດສິນຍົກເລີກຂອງສານ"[3]

ການລົບລ້າງປະຕິບັດຄຳຕັດສິນຂອງສານ ໝາຍເຖິງອົງການປະຕິບັດຄຳຕັດສິນຂອງສານທີ່ມີສິດອຳນາດດຳເນີນການອອກນິຕິກຳດ້ວຍຄຳສັ່ງຍົກເລີກການປະຕິບັດຄຳຕັດສິນຂອງສານ ເພື່ອກຳນົດຍົກເລີກທັງໝົດການປະຕິບັດຄຳຕັດສິນຂອງສານຜ່ານມາແຕ່ຕົ້ນຕະຫຼອດປາຍ.

"ການລົບລ້າງການປະຕິບັດຄຳຕັດສິນ ໝາຍເຖິງ ການຍົກເລີກທັງໝົດການປະຕິບັດຄຳຕັດສິນຂອງສານ ຜ່ານມາແຕ່ຕົ້ນຕະຫຼອດປາຍ"[4].

**2. ຄວາມສຳຄັນ**

ການໂຈະ, ການປ່ຽນແປງ, ການຍົກເລີກ ຫຼື ການລົບລ້າງປະຕິບັດຄຳຕັດສິນຂອງສານ ແມ່ນຂະບວນວິວັດຂອງການດຳເນີນການປະຕິບັດຄຳຕັດສິນຂອງສານ ຊຶ່ງບໍ່ອາດປັດສະຈາກໄດ້ ຖ້າຫາກມີສາເຫດພຽງພໍຕາມຂໍ້ ກຳນົດຂອງກົດໝາຍ ເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານດຳເນີນໄປຢ່າງພາວະວິໄສ, ຖືກກັບຄຳຕັດສິນຂອງສານ, ປົກປ້ອງສິດຜົນໂຫຍດອັນຊອບທຳຂອງຄູ່ຄວາມ, ຜົນປະໂຫຍດຂອງລັດ ແລະ ສັງຄົມ, ຈຳກັດ ຫຼື ຫຼຸດຜ່ອນຄຳຮ້ອງທຸກ, ຮ້ອງຂໍຄວາມເປັນທຳຍ້ອນການປະຕິບັດຄຳຕັດສິນຜິດພາດ. ສະນັ້ນ, ໃນເວລາປະຕິບັດຄຳຕັດສິນຂອງສານ ຖ້າຫາກມີເຫດຜົນພຽງພໍຕາມໜຶ່ງໃນບັນດາຂໍ້ກຳຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ຄົ້ນຄວ້າພິຈາລະນາອອກຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານຕາມຄວາມເໝາະສົມ ແລະ ຖືກຕ້ອງຕາມກົດໝາຍ.

ການໂຈະ, ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງການປະຕິບັດຄຳຕັດສິນຂອງສານບໍ່ໝາຍຄວາມວ່າແມ່ນ ການປະລະ, ເມີນເສີຍ, ປະຕິເສດບໍ່ນຳເອົາຄຳຕັດສິນຂອງສານມາຈັດຕັ້ງປະຕິບັດ, ແຕ່ຫາກເປັນການທົບທວນພິຈາລະນາຂອງອົງການທີ່ມີສິດອຳນາດເພື່ອແກ້ໄຂບັນຫາໃດໜຶ່ງທີ່ຍັງບໍ່ຈະແຈ້ງ, ບໍ່ສອດຄ່ອງດ້ວຍສາເຫດພາວະວິໄສຂອງຄູ່ຄວາມ, ຂອງອົງການຈັດຕັ້ງທີ່ມີສິດອຳນາດກ່ຽວຂ້ອງ. ນອກຈາກນັ້ນ, ກໍເພື່ອພິຈາລະນາແກ້ໄຂຄຳຮ້ອງທຸກ, ຮ້ອງຂໍຄວາມເປັນທຳ,

---

[2] ຂໍ້ 11, ມາດຕາ 3 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[3] ຂໍ້ 12, ມາດຕາ 3 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

[4] ຂໍ້ 13, ມາດຕາ 3 ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021

ຊຶ່ງຄຳຮ້ອງຂໍຄວາມເປັນທຳທີ່ຮັບມາກວດກາ ແລະ ແກ້ໄຂແມ່ນຄຳຮ້ອງຂໍຄວາມເປັນທຳທີ່ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຫຼື ປະຕິບັດບໍ່ສຳເລັດ, ລັດຖະບານຄຸ້ມຄອງລວມສູນວຽກງານແກ້ໄຂຄຳຮ້ອງ, ຄຳສະເໜີໃນຂອບເຂດທົ່ວປະເທດໂດຍມອບໃຫ້ກະຊວງຍຸຕິທຳໃນການແກ້ໄຂຄຳຮ້ອງ, ຄຳສະເໜີປ່ຽນແປງ, ຍົກເລີກ ຫຼື ລຶບລ້າງການປະຕິບັດຄຳຕັດສິນຂອງສານ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າພາຍໃນກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ, ຖ້າເຫັນວ່າມີເຫດຜົນ ຫຼື ມີສາເຫດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ກໍຕ້ອງອອກຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ລຶບລ້າງການປະຕິບັດຄຳຕັດສິນຂອງສານ.

**3. ຈຸດປະສົງ**

**1) ຈຸດປະສົງໃນການໂຈະປະຕິບັດຄຳຕັດສິນຂອງສານ:**

ປົກປ້ອງສິດຜົນປະໂຫຍດອັນຊອບທຳໂດຍກົງຂອງຄູ່ຄວາມ, ໃນກໍລະນີທີ່ຄູ່ຄວາມຫາກມີຄວາມຈຳເປັນຕ້ອງໄດ້ແກ້ໄຂຈັດການໜ້າວຽກອັນໃດອັນໜຶ່ງ ຫຼືເຫດການໃດໜຶ່ງທີ່ສົມເຫດສົມຜົນຕາມກົດໝາຍໄດ້ກຳນົດໄວ້, ເປັນຕົ້ນວ່າ: ຜູ້ຖືກປະຕິບັດຄຳຕັດສິນຂອງສານເຈັບປ່ວຍໜັກໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ, ຍ້າຍໄປຢູ່ບ່ອນຢູ່ໃໝ່ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ, ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຜູ້ສືບທອດຢູ່; ເຈົ້າໜີ້ເຫັນດີໃຫ້ໂຈະ, ບໍ່ມີຄວາມສາມາດຈ່າຍຄ່າທຳນຽມສານ, ຄ່າປັບໃໝ ຫຼື ເງິນຮິບຕາມຂໍ້ກຳນົດຂອງກົດໝາຍ, ພວມຖືກດຳເນີນຄະດີລົ້ມລະລາຍ.

ເພື່ອແກ້ໄຂການດຳເນີນຂັ້ນຕອນຂອງອົງການທີ່ມີສິດອຳນາດ, ເປັນຕົ້ນແມ່ນ: ການສະເໜີໂຈະຂອງອົງການໄອຍະການໃນກໍລະນີທີ່ມີການຮື້ຟື້ນຄະດີ, ຄຳຕັດສິນ ຫຼື ນິຕິກຳອື່ນຂອງສານ ທີ່ບໍ່ກົງກັບຕົວຈິງເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນມີຄຳເຫັນ; ຄຳຕັດສິນ ຫຼື ນິຕິກຳອື່ນຂອງສານບໍ່ຈະແຈ້ງ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນອະທິບາຍ;

ໃນຊ່ວງໄລຍະເວລາທີ່ຄູ່ຄວາມ ແລະ ອົງການປະຕິບັດຄຳຕັດສິນຂອງສານຕົກຢູ່ໃນສະພາບການດັ່ງກ່າວນັ້ນ ຈຳເປັນຕ້ອງໄດ້ໂຈະການປະຕິບັຄຳຕັດສິນຂອງສານໄວ້ຊົ່ວຄາວ ເພື່ອລໍຖ້າແກ້ໄຂບັນຫາທີ່ກ່າວມາຂ້າງເທິງສຳເລັດ.

ສະຫຼຸບຄວາມວ່າ:

ຈຸດປະສົງໃນການໂຈະປະຕິບັດຄຳຕັດສິນຂອງສານແມ່ນເພື່ອໃຫ້ໂອກາດຄູ່ຄວາມໄດ້ແກ້ໄຂຈັດການໜ້າວຽກອັນໃດອັນໜຶ່ງ ຫຼື ເຫດການໃດໜຶ່ງທີ່ສົມເຫດສົມຜົນຕາມກົດໝາຍໄດ້ກຳນົດໄວ້ ຫຼື ເພື່ອແກ້ໄຂການດຳເນີນຂັ້ນຕອນຄືນໃໝ່ຂອງອົງການທີ່ມີສິດອຳນາດ.

**2) ຈຸດປະສົງໃນການປ່ຽນແປງ, ຍົກເລີກ ຫຼື ລຶບລ້າງການປະຕິບັດຄຳຕັດສິນຂອງສານ:**

ການປ່ຽນແປງ, ຍົກເລີກ ຫຼື ລຶບລ້າງການປະຕິບັດຄຳຕັດສິນຂອງສານ ແມ່ນຍ້ອນການຈັດຕັ້ງປະຕິບັດບໍ່ຖືກຕາມຄຳຕັດສິນຂອງສານ ຫຼື ຂະບວນການປະຕິບັດຄຳຕັດສິນຂອງສານດຳເນີນບໍ່ຖືກຕ້ອງຕາມຂໍ້ກຳນົດຂອງກົດໝາຍ ຫຼື ຕິນິກຳກ່ຽວຂ້ອງ.

ສະນັ້ນ, ຈຸດປະສົງໃນການປ່ຽນແປງ, ຍົກເລີກ ຫຼື ລຶບລ້າງການປະຕິບັດຄຳຕັດສິນຂອງສານເພື່ອແກ້ໄຂຈັດການບັນຫາທີ່ຕ້ອງໄດ້ປະຕິບັດຕໍ່ກັນລະຫວ່າງຄູ່ຄວາມເປັນຕົ້ນແມ່ນ: ຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫຼື ແກ້ໄຂຄືນໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງແລ້ວດຳເນີນການປະຕິບັດຄຳຕັດສິນ ຫຼື ນິຕິກຳອື່ນຂອງສານຄືນໃໝ່ຕາມແຕ່ລະກໍລະນີ.

**4. ສາເຫດທີ່ພາໃຫ້ມີການໂຈະ, ການປ່ຽນແປງ, ການຍົກເລີກ ຫຼື ການລຶບລ້າງການຈັດ ຕັ້ງປະຕິບັດຄຳຕັດສິນຂອງສານ**

ໃນສະພາບການຕົວຈິງ, ການປະຕິບັດຄຳຕັດສິນຂອງສານ ຍັງມີບາງກໍລະນີທີ່ເຮັດໃຫ້ການປະຕິບັດຄຳຕັດສິນຂອງສານບໍ່ສາມາດດຳເນີນໄດ້, ຖ້າຈະສືບຕໍ່ດຳເນີນກໍຈະເຮັດໃຫ້ເກີດຄວາມເສຍຫາຍ ຫຼື ຄວາມບໍ່ຍຸຕິທຳໃຫ້ແກ່ຄູ່ຄວາມ, ລັດ ແລະ ສັງຄົມ. ສະນັ້ນ, ກົດໝາຍໄດ້ກຳນົດເງື່ອນໄຂ ເພື່ອເປັນສາເຫດການໂຈະ,ປ່ຽນແປງ, ຍົກເລີກ ຫຼື ລຶບລ້າງການປະຕິບັດຄຳຕັດສິນຂອງສານໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ.

- **ການປະຕິບັດຄຳຕັດສິນຂອງສານຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:**

- ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້າເສຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ: ເຈັບປ່ວຍໜັກໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ:

ໃນກົດໝາຍບໍ່ໄດ້ກຳນົດຢ່າງຈະແຈ້ງວ່າຜູ້ທີ່ເປັນຄົນບ້າເສຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນນັ້ນຕ້ອງໄດ້ຮັບການຢັ້ງຢືນຈາກພາກສ່ວນໃດ, ແຕ່ໃນສະພາບການຕົວຈິງແມ່ນຕ້ອງໄດ້ຮັບການຢັ້ງຢືນ ຈາກໂຮງໝໍທີ່ໜ້າເຊື່ອຖືໄດ້ເປັນຕົ້ນແມ່ນໂຮງໝໍແຂວງ, ສູນກາງ ຫຼື ຕາມຄຳຕັດສິນຂອງສານ.

ຕາມຫຼັກການແລ້ວຜູ້ເປັນຄົນບ້າເສຍຈິດອາດຈະແມ່ນ "ຜູ້ເສຍຄວາມສາມາດທາງດ້ານການປະພຶດ ແມ່ນຜູ້ທີ່ບໍ່ສາມາດກະທຳ ຫຼື ບໍ່ຮູ້ໄດ້ຜົນສະທ້ອນຈາກການກະທຳຂອງຕົນ ເນື່ອງຈາກສຸຂະພາບຈິດຂອງຜູ້ກ່ຽວ ຊຶ່ງສານເປັນຜູ້ຕັດສິນ ຮັບຮູ້ວ່າ ເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ"[5]. ສະນັ້ນ, ເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານໄດ້ດຳເນີນໄປຢ່າງພາວະວິໄສ ແລະ ຄົບຖ້ວນຈຳເປັນຕ້ອງໄດ້ໂຈະການປະຕິບັດຄຳຕັດສິນຂອງສານ.

- ສະພາແຫ່ງຊາດ ສະເໜີໃຫ້ໂຈະຢ່າງເປັນລາຍລັກອັກສອນ ບົນພື້ນຖານການປະສານສົມທົບກັບ ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແລະ ໃນໄລຍະເວລາຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ:

ໃນໄລຍະເວລາທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ ພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳກ່ຽວກັບ "ຄຳຮ້ອງຂໍຄວາມເປັນທຳທີ່ມີຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຫຼື ປະຕິບັດບໍ່ທັນສຳເລັດ"[6] ອົງການປະຕິບັດຄຳຕັດສິນຂອງສານທີ່ມີສິດອຳນາດກ່ຽວຂ້ອງຈະຕ້ອງອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານຕາມການສະເໜີຂອງສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ.

- ອົງການໄອຍະການປະຊາຊົນສູງສຸດ ສະເໜີໂຈະ ຢ່າງເປັນລາຍລັກອັກສອນ ໃນກໍລະນີ ມີການຮື້ຟື້ນຄະດີຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍ:

ໃນກໍລະນີມີການຮື້ຟື້ນຄະດີຕາມກຳນົດເວລາທີ່ໄດ້ກຳນົດໃນກົດໝາຍ, ອົງການໄອຍະການປະຊາຊົນສູງສຸດ ມີສິດໃນການສະເໜີໂຈະການປະຕິບັດບໍ່ຖືກຕ້ອງຕາມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ໂດຍສະເໜີໂຈະໄປຍັງກະຊວງຍຸຕິທຳ ກໍຄືກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານເພື່ອໃຫ້ອອກຄຳສັ່ງໂຈະໄປຍັງອົງການປະຕິບັດຄຳຕັດສິນຂອງສານ, ພ້ອມກັນນັ້ນ ອົງການໄອຍະການປະຊາຊົນສູງສຸດກໍຈະສະ ເໜີທວງເອົາສຳນວນຄຳຕັດສິນຂອງສານເພື່ອນຳໄປພິຈາລະນາໃນຂັ້ນຕອນການຮື້ຟື້ນຄະດີ, ທຸກຄຳສະເໜີຂອງອົງການໄອຍະການປະຊາຊົນສູງສຸດ, ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງຈັດຕັ້ງປະຕິບັດພາຍໃນກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ ນັບແຕ່ວັນທີ່ໄດ້ຮັບຄຳສະເໜີເປັນຕົ້ນໄປ.

- ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ອອກຈາກສະຖານທີ່ຢູ່ອາໄສ ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ:

---

[5] ມາດຕາ 71, ປະມວນກົດໝາຍແພ່ງ, ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018.

[6] ຂໍ້ 5 ມາດຕາ 31, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ສະບັບເລກທີ 53/ສພຊ, ລົງວັນທີ 14 ທັນວາ 2014.

ຕາມຫຼັກການຂອງກົດໝາຍແລ້ວ, ບ່ອນຢູ່ ຂອງບຸກຄົນ ແມ່ນ ບ່ອນບຸກຄົນນັ້ນໄດ້ຈົດທະບຽນສຳມະໂນຄົວ ຫຼື ບ່ອນຢູ່ຕົວຈິງຂອງຜູ້ກ່ຽວ, ໃນກໍລະນີ ທີ່ບໍ່ສາມາດກຳນົດບ່ອນຢູ່ຂອງບຸກຄົນໃດໜຶ່ງໃຫ້ຖືເອົາບ່ອນອາໄສຢູ່ສຸດທ້າຍຂອງບຸກຄົນນັ້ນເປັນບ່ອນຢູ່.

ໃນສະພາບຕົວຈິງຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ອອກຈາກສະຖານທີ່ຢູ່ອາໄສໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ, ອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ຢຸດຕິການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ຫຼື ໂຈະການປະຕິບັດຄຳຕັດສິນຂອງສານໄວ້ກ່ອນ ເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຊອກຫາຜູ້ກ່ຽວ ແລະ ຢັ້ງຢືນບ່ອນຢູ່ທີ່ແນ່ນອນ ແລ້ວສືບຕໍ່ປະຕິບັດຄຳຕັດສິນຂອງສານ.

- ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຜູ້ສືບທອດຢູ່:

ໃນກໍລະນີ ຜູ້ຖືກປະຕິບັດຄຳຕັດສິນຂອງສານຫາກໄດ້ເສຍຊີວິດ ແຕ່ຜູ້ກ່ຽວຍັງມີຊັບສິນ ຫຼື ມູນມໍຣະດົກ ແລະ ມີຜູ້ສືບທອດ ເພື່ອປະຕິບັດຄຳຕັດສິນຂອງສານ ອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເພື່ອລໍຖ້າເປີດການສືບທອດມູນມໍຣະດົກ.

ກໍລະນີບໍ່ມີຜູ້ສືບທອດມູນມໍຣະດົກ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານຈະນຳເອົາມູນມໍຣະດົກດັ່ງກ່າວມາປະຕິບັດຄຳຕັດສິນຂອງສານ.

- ຄຳຕັດສິນຂອງສານ ທີ່ບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນ ມີຄຳເຫັນ:

ໃນສະພາບການຕົວຈິງ, ການປະຕິບັດຄຳຕັດສິນຂອງສານແມ່ນໄດ້ພົບບັນຫາເຊັ່ນ: ຄຳຕັດສິນກ່ຽວກັບທີ່ດິນ, ໃນຄຳຕັດສິນໄດ້ກຳນົດເນື້ອທີ່ດິນລັກແດ່ ແຕ່ເວລາຈັດຕັ້ງປະຕິບັດຕົວຈິງ, ດິນຕອນດັ່ງກ່າວ ບາງທີເນື້ອທີ່ອາດຈະບໍ່ຖືກຕ້ອງ, ອາດຈະກວ້າງກວ່າ ຫຼື ນ້ອຍກວ່າ ຫຼື ດິນຕອນດັ່ງກ່າວບໍ່ມີ ຍ້ອນໄດ້ກາຍ ເປັນຂອງບຸກຄົນອື່ນທີ່ຖືກຕ້ອງຕາມກົດໝາຍແລ້ວ....

ຕໍ່ບັນຫາດັ່ງກ່າວ ບໍ່ໃຫ້ໝາຍຄວາມວ່າຈະເປັນຊ່ອງຫວ່າງຂອງກົດໝາຍເພື່ອໃຫ້ອົງການປະຕິບັດຄຳຕັດສິນຂອງສານນຳໃຊ້ເພື່ອໂຈະການປະຕິບັດຄຳຕັດສິນຂອງສານແຕ່ຢ່າງໃດ, ກ່ອນຈະນຳໃຊ້ການໂຈະໃນກໍລະນີນີ້ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງສາກ່ອນເພື່ອໃຫ້ເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ອົງປະຕິບັດຄຳຕັດສິນຂອງສານຈະຕ້ອງສະເໜີໃຫ້ສານມີ ຄຳເຫັນ ແລະ ອະທິບາຍ ຫຼື ຢັ້ງຢືນຄືນຕໍ່ກັບຄຳຕັດສິນຂອງສານ.

- ຄຳຕັດສິນຂອງສານ ບໍ່ຈະແຈ້ງ ຊຶ່ງອົງການປະຕິບັດຄຳຕັດສິນຂອງສານໄດ້ສະເໜີໃຫ້ສານປະຊາຊົນອະທິບາຍ:

ໃນກໍລະນີນີ້ສານມີໜ້າທີ່ໃນການອະທິບາຍ ແລະ ແຈ້ງຕອບກ່ຽວກັບບັນຫາທີ່ໄດ້ລະບຸໃນຄຳສະເໜີຂອງອົງການປະຕິບັດຄຳຕັດສິນຂອງສານ, ອາດຈະມີການປັບປຸງໄວຍາກອນ ຫຼື ຄວາມຜິດພາດກ່ຽວກັບຕົວເລກ...ຫຼືບໍ່ໄດ້ມີການກຳນົດຕົວເລກໃນການໃຊ້ແທນທີ່ແນ່ນອນ, ໃນໄລຍະທີ່ລໍຖ້າການແຈ້ງຕອບຂອງສານປະຊາຊົນ, ອົງການປະຕິບັດຄຳຕັດສິນຂອງສານຕ້ອງໄດ້ອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ.

- ເຈົ້າໜີ້ ເຫັນດີໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໂຈະການປະຕິບັດຄຳຕັດສິນຂອງສານ:

ໃນກໍລະນີນີ້, ຖ້າຫາກວ່າຜູ້ໄດ້ຮັບການປະຕິບັດຄຳຕັດສິນຂອງສານ ຫຼື ເຈົ້າໜີ້ ຫາກເຫັນດີໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານໂຈະການປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານຈະຕ້ອງອອກຄຳສັ່ງໂຈະຖ້າຫາກວ່າການໂຈະ ນັ້ນບໍ່ຂັດກັບລະບຽບກົດໝາຍ, ບໍ່ແຕະຕ້ອງເຖິງສິດຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ແລະ ບຸກຄົນທີສາມ.

- ຜູ້ຖືກປະຕິບັດຄຳຕັດສິນຂອງສານ ບໍ່ມີຄວາມສາມາດຈ່າຍ ຄ່າທຳນຽມປະຕິບັດຄຳຕັດສິນຂອງສານ, ຄ່າປັບ

ໃໝ ຫຼື ເງິນຣິບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ:

ຜູ້ຖືກປະຕິບັດຄຳຕັດສິນຂອງ ສານບໍ່ມີຄວາມສາມາດໃນການປະຕິບັດຄຳຕັດສິນຂອງສານເປັນຕົ້ນແມ່ນຄ່າທຳນຽມປະຕິບັດຄຳຕັດສິນຂອງສານ, ຄ່າປັບໃໝ ຫຼື ເງິນຣິບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ຕ້ອງໄດ້ໂຈະການປະຕິບັດຄຳຕັດສິນຂອງສານໄວ້ຈົນກວ່າຜູ້ກ່ຽວຈະມີຄວາມສາມາດໃນການປະຕິບັດຄຳຕັດສິນຂອງສານ.

- ຜູ້ຖືກປະຕິບັດຄຳຕັດສິນຂອງສານ ພວມຖືກດຳເນີນຄະດີລົ້ມລະລາຍ:

ໃນກົດໝາຍຂອງ ສປປ ລາວ ຍັງບໍ່ໄດ້ກຳນົດກ່ຽວກັບການລົ້ມລະລາຍບຸກຄົນ, ມີແຕ່ກຳນົດກ່ຽວກັບການລົ້ມລະລາຍຂອງວິສາຫະກິດ. ສະນັ້ນ, ໃນກໍລະນີນີ້ ຜູ້ຖືກປະຕິບັດຄຳຕັດສິນຂອງສານອາດຈະແມ່ນນິຕິບຸກຄົນ, ການຈັດຕັ້ງ ຫຼື ວິສາຫະກິດທີ່ພວມຖືກດຳເນີນຄະດີລົ້ມລະລາຍ, ຜ່ານໄລຍະການຟື້ນຟູ, ຖ້າວ່າວິສາ ຫະກິດສາມາດເຄື່ອນໄຫວທຸລະກິດຂອງຕົນຢ່າງມີປະສິດທິຜົນ, ສານຈະຕັດສິນໃຫ້ດຳເນີນກິດຈະການຕໍ່ໄປ, ຖ້າວ່າວິສາຫະກິດຫາກບໍ່ສາມາດຟື້ນຕົວໄດ້ ສານຈະຕັດສິນໃຫ້ວິສາຫະກິດນັ້ນລົ້ມ ລະລາຍ,ໃນເວລາດຳເນີນການຟື້ນຟູວິສາຫະກິດຄືນໃໝ່ຢູ່ນັ້ນ ສານສາມາດຕັດສິນໃຫ້ວິສາຫະກິດລົ້ມລະລາຍເວລາໃດ ກໍໄດ້ ຖ້າຫາກເຫັນວ່າວິສາຫະກິດນັ້ນຈະບໍ່ສາມາດຟື້ນຕົວໄດ້, ໃນຊ່ວງໄລຍະນີ້ ອົງການປະຕິບັດຄຳຕັດສິນຂອງສານຈະອອກຄຳສັ່ງໂຈະການປະຕິບັດຄຳຕັດສິນຂອງສານໄວ້ຊົ່ວຄາວ ເພື່ອເຮັດໃຫ້ການແກ້ໄຂໃນຂະບວນການລົ້ມລະລາຍຂອງວິສາຫະກິດດຳເນີນຖືກຕາມຂັ້ນຕອນ, ເມື່ອສາເຫດທີ່ພາໃຫ້ໂຈະການປະຕິບັດຄຳຕັດສິນຂອງສານ ຫາກໝົດໄປແລ້ວກໍໃຫ້ສືບຕໍ່ປະຕິບັດ.

- ການໂຈະການປະຕິບັດຄຳຕັດສິນຂອງສານ ຕາມການຕົກລົງຂອງສານອາຍາ:

+ ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້ານເສຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ: ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກຄະນະແພດຂັ້ນເມືອງຂຶ້ນໄປ;

+ ມີການຮື້ຟື້ນຄະດີ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍໂດຍການສະເໜີໂຈະຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

+ ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ອອກຈາກທ້ອງຖິ່ນສະຖານທີ່ຢູ່ອາໃສໄປກ່ອນແລ້ວ ໂດຍບໍ່ຮູ້ທີ່ຢູ່ແນ່ນອນ ຊຶ່ງມີການຢັ້ງຢືນຢ່າງຖືກຕ້ອງ;

+ ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ເສຍຊີວິດແຕ່ຜູ້ກ່ຽວຍັງມີຜູ້ສືບທອດຢູ່;

+ ມີການສະເໜີໃຫ້ໂຈະຂອງອົງການໄອຍະການປະຊາຊົນ ຕາມທີ່ໄດ້ກຳນົດຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ;

+ ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງບໍ່ກົງກັບຕົວຈິງເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້;

ເມື່ອມີສາເຫດທີ່ພາໃຫ້ໂຈະການປະຕິບັດຄຳຕັດສິນຂອງສານທີ່ກ່າວມາຂ້າງເທິງນີ້ຫາກໝົດໄປແລ້ວແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ"[7].

- ການໂຈະປະຕິບັດໂທດອິດສະຫຼະພາບ:

ສາເຫດທີ່ພາໃຫ້ໂຈະການປະຕິບັດໂທດອິດສະຫຼະພາບ ຕາມຂໍ້ກຳນົດຂອງປະມວນກົດໝາຍອາມີດັ່ງນີ້:

+ ນັກໂທດເຈັບເປັນຢ່າງໜັກໜ່ວງ ໂດຍມີການການຢັ້ງຢືນຈາກຄະນະແພດ, ພາຍຫຼັງທີ່ໄດ້ຮັບ ພາຍຫຼັງທີ່ໄດ້

---

[7] ປຶ້ມຄູ່ມືການດຳເນີນຄະດີອາຍາ ຢູ່ ສປປ ລາວ, ໂດຍ: ຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ພາຍໃຕ້ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳແຫ່ງ ສປປ ລາວ (ໜ້າທີ 313), ປີ 2014.

ຮັບການປິ່ນປົວແລ້ວ ໃຫ້ນຳມາປະຕິບັດໂທດ;

+ ແມ່ຍິງຖືພາ ຫຼື ມີລູກນ້ອຍທີ່ມີອາຍຸຕ່ຳກວ່າໜຶ່ງປີ ຈົນກວ່າລູກມີອາຍຸ ແຕ່ໜຶ່ງປີຂຶ້ນໄປ;

+ ໃນກໍລະນີນັກໂທດຕັດອິດສະຫຼະພາບຕ່ຳກວ່າສາມປີ ແລະ ເປັນແຮງງານຕົ້ນຕໍຂອງຄອບຄົວ, ຖ້າຫາກນຳໄປປະຕິບັດໂທດຈະມີຜົນກະທົບຢ່າງໜັກໜ່ວງຕໍ່ຄອບຄົວຜູ້ກ່ຽວມີສິດຂໍໂຈະໄດ້ໜຶ່ງປີ;

+ ໃນກໍລະນີນັກໂທດມີຄວາມຈຳເປັນ ຕ້ອງປະຕິບັດໜ້າທີ່ທາງລັດຖະການໂດຍໄດ້ຮັບການຢັ້ງຢືນຈາກອົງການຈັດຕັ້ງຜູ້ກ່ຽວ ຍົກເວັ້ນການກະທຳຜິດທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ ຜູ້ກ່ຽວຈະມີສິດຂໍໂຈະໄດ້ໜຶ່ງປີ.

ໃນໄລຍະເວລາການໂຈະປະຕິບັດໂທດຕັດອິດສະຫຼະພາບ ໃນກໍລະນີທີ່ກ່າວມາເທິງນີ້ ຈະບໍ່ນັບເຂົ້າໃນການປະຕິບັດໂທດ”[8].

• **ສາເຫດທີ່ມີການປ່ຽນແປງ, ການຍົກເລີກ ຫຼື ການລຶບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ:**

- ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນ ຫຼື ນິຕິກຳອື່ນຂອງສານ;

- ປະຕິບັດບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ແລະ ລະເມີດລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ທີ່ການປະຕິບັດຄຳຕັດສິນຂອງສານ ຫາກຖືກປ່ຽນແປງ, ຍົກເລີກ ຫຼື ລຶບລ້າງແລ້ວ ສິ່ງທີ່ໄດ້ປະຕິບັດຕໍ່ກັນນັ້ນຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫຼື ແກ້ໄຂຄືນ ໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງແລ້ວດຳເນີນການປະຕິບັດຄຳຕັດສິນ ຫຼື ນິຕິກຳອື່ນຂອງສານຄືນໃໝ່ຕາມແຕ່ລະກໍລະນີ.

ພິເສດໃນປະມວນກົດໝາຍອາຍາໄດ້ກຳນົດກ່ຽວກັບການພົ້ນຈາກການປະຕິບັດຄຳຕັດສິນຂອງສານ: “ ນັກໂທດທີ່ຖືກຕັດສິນລົງໂທດດັດສ້າງໂດຍບໍ່ຕັດອິດສະຫຼະພາບ ຫຼື ໂທດຕັດອິດສະຫຼະພາບຕ່ຳກວ່າສາມປີ ຊຶ່ງຍັງບໍ່ທັນໄດ້ປະຕິບັດໂທດຂອງຕົນ ແຕ່ໄດ້ສ້າງຜົນງານອັນໃຫຍ່ຫຼວງຕໍ່ປະເທດຊາດ ຫຼື ເປັນພະຍາດຮ້າຍແຮງ, ຖ້າວ່າຜູ້ກ່ຽວຫາກບໍ່ເປັນອັນຕະລາຍຕໍ່ສັງຄົມອີກຕໍ່ໄປ ສານອາດຕັດສິນໃຫ້ຜູ້ກ່ຽວພົ້ນຈາກການປະຕິບັດໂທດທັງໝົດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ”[9].

ນັກໂທດໃນສະຖານການກະທຳຜິດເບົາ ທີ່ໄດ້ໂຈະການປະຕິບັດໂທດໄວ້ຊົ່ວຄາວ ຕາມທີ່ກຳນົດໄວ້ໃນມາດຕາ 103 ຂອງປະມວນກົດໝາຍກົດໝາຍອາຍາ, ຖ້າວ່າພາຍໃນກຳນົດເວລາດັ່ງກ່າວຜູ້ກ່ຽວຫາກໄດ້ສ້າງຜົນງານອັນໃຫຍ່ຫຼວງຕໍ່ປະເທດຊາດ ສານອາດຕັດສິນໃຫ້ຜູ້ກ່ຽວພົ້ນຈາກການປະຕິບັດໂທດທີ່ຍັງເຫຼືອ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ.

ໃນສະພາບການຕົວຈິງ, ສາເຫດທີ່ມີການປ່ຽນແປງ, ການຍົກເລີກ ຫຼື ການລຶບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານອາດຈະເກີດຈາກຫຼາຍສາເຫດ ເປັນຕົ້ນແມ່ນ:

+ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ເສຍຊີວິດ: ການປະຕິບັດໂທດທາງອາຍາຂອງຜູ້ຖືກຕັດສິນລົງໂທດ ຈະຕົກໄປ, ຖ້າວ່າຜູ້ກ່ຽວຫາກໄດ້ເສຍຊີວິດ;

+ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໝົດໄປ: ໃນປະມວນກົດໝາຍອາຍາ ມາດຕາ 99 ໄດ້ກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ ຊຶ່ງໂທດທີ່ສານວາງໃສ່ຜູ້ກະທຳຜິດ ຈະບໍ່ສາມາດປະຕິບັດໄດ້ ຖ້າຫາກພາຍກຳນົດເວລາດັ່ງນີ້:

---

[8] ມາດຕາ 103, ປະມວນກົດໝາຍອາຍາ, ສະບັບເລກທີ26/ສພຊ, ລົງວັນທີ 17 ພຶດສະພາ 2017.

[9] ມາດຕາ 102, ປະມວນກົດໝາຍອາຍາ, ສະບັບເລກທີ26, ລົງວັນທີ 17 ພຶດສະພາ 2017.

- ໜຶ່ງປີ ສຳລັບການກະທຳຜິດໃນຖານລະຫຸໂທດ;

- ເຈັດປີ ສຳລັບການກະທຳຜິດໃນຖານໂທສານຸໂທດ;

- ສິບຫ້າປີ ສຳລັບການກະທຳຜິດໃນຖານຄາຣຸໂທດ.

ອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານ ໃຫ້ນັບແຕ່ວັນຄຳຕັດສິນໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ. ໃນກໍລະນີທີ່ໄດ້ກະທຳຜິດເທື່ອໃໝ່ ພາຍໃນກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນຂອງສານໃສ່ການກະທຳຜິດເທື່ອກ່ອນນັ້ນ ອາຍຸຄວາມດັ່ງກ່າວ ໃຫ້ນັບແຕ່ວັນກະທຳຜິດເທື່ອໃໝ່ເປັນຕົ້ນໄປ. ໃນກໍລະນີທີ່ໄດ້ຫຼົບໜີຈາກການປະຕິບັດໂທດພາຍໃນກຳນົດອາຍຸຄວາມໃນການປະຕິບັດຄຳຕັດສິນ ອາຍຸຄວາມດັ່ງກ່າວ ໃຫ້ນັບແຕ່ວັນຜູ້ຖືກຕັດສິນເຂົ້າສະເໜີຕົນ ຫຼື ຖືກຈັບຕົວເປັນຕົ້ນໄປ.

+ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ຮັບອະໄພຍະໂທດ (ໂທດທາງອາຍາ): ແມ່ນການຕົກລົງຂອງປະທານປະເທດ ໃນການຫຼຸດຜ່ອນໂທດ ຫຼື ລົບລ້າງໂທດທີ່ຍັງເຫຼືອ ແລ້ວໃຫ້ປ່ອຍຕົວຜູ້ຖືກລົງໂທດ;

+ໄດ້ມີການໃຫ້ນິລະໂທດກຳ: ແມ່ນການລົບລ້າງການກະທຳຜິດທາງອາຍາໃດໜຶ່ງ, ການປະຕິບັດໂທດທາງອາຍາສຳລັບການກະທຳຜິດທາງອາຍາໃດໜຶ່ງຈະຕົກໄປ ຖ້າຫາກວ່າສະພາແຫ່ງຊາດໃຫ້ການຮັບຮອງ ແລະ ປະທານປະເທດປະກາດໃຫ້ນິລະໂທດກຳແກ່ການກະທຳຜິດທາງອາຍານັ້ນ.

ນອກຈາກນັ້ນ, ສາເຫດທີ່ພາໃຫ້ມີການປ່ຽນແປງ, ຍົກເລີກ ຫຼື ລົບລ້າງປະຕິບັດຄຳຕັດສິນຂອງສານ, ພະນັກງານປະຕິບັດຄຳຕັດສິນຂອງສານຍັງຈຳເປັນຕ້ອງອີງໃສ່ຂໍ້ກຳນົດຂອງກົດໝາຍທີ່ກ່ຽວຂ້ອງ ເຊັ່ນ: ໃນກົດ ໝາຍວ່າດ້ວຍການດຳເນີນຄະດີແພ່ງໄດ້ກຳນົດ: “ ສາເຫດທີ່ມີການລົບລ້າງ ຫຼື ປ່ຽນແປງຄຳຕັດສິນຂອງສານຂັ້ນຕົ້ນມີຄື: ການອະທິບາຍເຫດການຂອງຄະດີບໍ່ຊັດເຈນ; ການນຳເອົາຫຼັກຖານໃນຄະດີອອກມາພິຈາລະນາບໍ່ຄົບຖ້ວນ; ການວິນິດໄສຂອງສານ ບໍ່ສອດຄ່ອງກັບເຫດການຕົວຈິງຂອງຄະດີ; ການນຳໃຊ້ກົດໝາຍບໍ່ຖືກຕ້ອງ;ການລະເມີດລະບຽບການດຳເນີນຄະດີແພ່ງ;

- ສານຂັ້ນຕົ້ນໄດ້ວິນິດໄສແລ້ວແຕ່ບໍ່ໄດ້ລົງຄຳຕັດສິນ ຫຼື ບໍ່ໄດ້ພິຈາລະນາບັນຫາໃດໜຶ່ງ ແລະ ສາເຫດອື່ນ”[10].

**References:**


1. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
2. ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020;
3. ປະມວນກົດໝາຍແພ່ງ, ສະບັບເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018.
4. ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ສະບັບເລກທີ 53/ສພຊ, ລົງວັນທີ 14 ທັນວາ 2014;
5. ປື້ມຄູ່ມືການດຳເນີນຄະດີອາຍາ ຢູ່ ສປປ ລາວ, ໂດຍ: ຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາພາຍໃຕ້ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳແຫ່ງ ສປປ ລາວ, ປີ 2014;
6. ປະມວນກົດໝາຍອາຍາ, ສະບັບເລກທີ26/ສພຊ, ລົງວັນທີ 17 ພຶດສະພາ 2017;
7. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບເລກທີ 13/ສພຊ, ລົງວັນທີ 3 ກໍລະກົດ 2012.


[10] ມາດຕາ 279, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບເລກທີ 13/ສພຊ, ລົງວັນທີ 3 ກໍລະກົດ 2012.